**ກະຊວງກະສິກຳ ແລະ ສິ່ງແວດລ້ອມ**

**ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ**

ເງິນກູ້ເລກທີ: IDA No.673580-LA ແລະ IDA No.73590-LA, ລະຫັດໂຄງການ. P178545

# ປະກາດຮັບສະໝັກພະນັກງານ ປັບປຸງຊີວິດການເປັນຢູ່ ເມືອງ

Request for Expression of Interest (REOI)

ບ່ອນເຮັດວຽກ: ຫ້ອງການໂຄງການ ປຊກ ເມືອງນອງ ແຂວງສະຫວັນນະເຂດ

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ແລະ ມີຈຸດປະສົງທີ່ຈະນຳໃຊ້ ທຶນສ່ວນໜຶ່ງ ເຂົ້າໃນການຮັບພະນັກງານສັນຍາຈ້າງ ຕຳແໜ່ງປັບປຸງຊີວິດການເປັນຢູ່ ເມືອງ ຈຳນວນ 1 ຕຳແໜ່ງ ປະຈຳຢູ່ ຫ້ອງການໂຄງການ ປຊກ ທີ່ ເມືອງ ນອງ ແຂວງສະຫວັນນະເຂດ ດັ່ງນີ້:

2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຜູ້ທີ່ສົນໃຈ ທີ່ມີຄຸນສົມບັດຄົບ ຖ້ວນຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຂ້າງລຸ່ມ ***ຍື່ນເອກະສານສະໝັກດ້ວຍຕົນເອງ*** ທາງອີເມວ ສົ່ງມາຕາມທີຢູ່ Email: **info.hr@clearlaos.org** ນີ້ພ້ອມເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອ້າງອີງ ປະສົບການດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການ ຂອງທ່ານ ເພື່ອມາຮັບຜິດຊອບເຮັດວຽກດັ່ງກ່າວ:

   - **ຕຳແໜ່ງພະນັກງານປັບປຸງຊີວິດການເປັນຢູ່ ຂັ້ນເມືອງ**

➢ ຂໍ້ກຳນົດເງື່ອນໄຂເບື້ອງຕົ້ນ ຂອງຜູ້ສະມັກທີ່ສາມາດຍື່ນສະມັກໄດ້ ປະກອບມີດັ່ງນີ້:

- ລະດັບທາງດ້ານການສຶກສາ: ຕ້ອງຮຽນຈົບມີໃບປະກາດວິຊາຊີບຊັ້ນສູງຂຶ້ນໄປ ສາຂາດ້ານກະສິກຳ, ລ້ຽງສັດ, ປ່າໄມ້, ການປະມົງ, ການເງິນ ແລະ ພັດທະນາຊົນນະບົດ;
- ປະສົບການການເຮັດວຽກຜ່ານມາ: ຢ່າງໜ້ອຍຕ້ອງເຮັດວຽກຜ່ານມາແລ້ວ 3 (ສາມ) ປີ ໃນວຽກງານດ້ານການຈັດຕັ້ງ ປະຕິບັດໂຄງການ ທີ່ກ່ຽວກັບການປັບປຸງຊີວິດການເປັນຢູ່ ແລະ ການສົ່ງເສີມ ການປູກພືດ ແລະ ການລ້ຽງສັດ, ຈຳເປັນ ຕ້ອງເຄີຍຜ່ານປະສົບການໃນການສ້າງກຸ່ມ ແລະ ການຄຸ້ມຄອງກຸ່ມ, ວຽກການເງິນຈຸລະພາກໃນຊົນນະບົດ, ແລະ ວຽກ ການສ້າງລາຍຮັບ ລວມທັງການລະດົມ ປຸກລະດົມຊຸມຊົນໃຫ້ເຂົ້າຮ່ວມການຈັດຕັ້ງປະຕິບັດກິດຈະກຳຕ່າງໆ. ມີປະສົບ ການໃນການສະໜອງການຝຶກອົບຮົມໃຫ້ແກ່ປະຊາຊົນ ຫລື ຊຸມຊົນໃນເຂດຫ່າງໄກສອກຫລີກ;
- ມີຄວາມຮູ້ໃນການນຳໃຊ້ຄອມພິວເຕີ ໂດຍສະເພາະໂປຣແກຣມ MS Office.

➢ ເອກະສານຍື່ນສະໝັກ ປະກອບມີ:

- ໃບຄຳຮ້ອງຍື່ນສະໝັກງານ: ໃຫ້ລະບຸລະອຽດຊື່ຕຳແໜ່ງທີ່ສະໝັກ, ສະຖານທີ່ຫ້ອງການ ທີ່ສະເໜີເຂົ້າປະຈຳການ. ພ້ອມທັງປະສົບການຜ່ານມາທີ່ຄ້າຍຄືກັບວຽກທີ່ຍື່ນສະໝັກ, ລາຍຊື່ ແລະ ເບີໂທລະສັບ ຂອງຜູ້ທີ່ສາມາດຢັ້ງຢືນ ໃຫ້ທ່ານ ແລະ ທາງໂຄງການສາມາດສອບຖາມໄດ້ ປະມານ 3 ທ່ານ;
- ຊີວະປະຫວັດຂອງຜູ້ຍື່ນສະໝັກ ພ້ອມຮູບຖ່າຍ (ລະບຸລະອຽດ ກ່ຽວກັບລະດັບການສຶກສາ ແລະ ປະສົບການເຮັດ ວຽກຜ່ານມາ);
- ສຳເນົາໃບປະກາດຈົບການສຶກສາ ແລະ ໃບຄະແນນ, ໃບຢັ້ງຢືນຜ່ານການຝຶກອົມຮົມຕ່າງໆ;
- ສຳເນົາໃບຢັ້ງຢືນການເຮັດວຽກຜ່ານມາ ວຽກທີ່ຄ້າຍຄືກັບວຽກນີ້, ໃບແຈ້ງໂທດ, ໃບຢັ້ງຢືນທີ່ຢູ່, ບັດປະຈຳຕົວ, ໃບຂັບຂີ່.

3. ຂໍ້ມູນເພີ່ມເຕີມ ລວມທັງຂໍ້ກຳນົດເງື່ອນໄຂການອ້າງອີງຕ່າງໆ ທ່ານສາມາດພົວພັນເອົາໄດ້ ໃນເວລາເຮັດວຽກ ນັບແຕ່ເວລາ 08:00 ໂມງ ຫາ 16:00 ໂມງ, ແຕ່ວັນຈັນ ເຖິງ ວັນສຸກ ທີ່ຫ້ອງການ ປຊກ, ຕັ້ງຢູ່ໃນຫ້ອງວ່າການລັດຖະບານ, ບ້ານສີສະຫວາດ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ ຫລື ເຂົ້າເບິ່ງໃນເວັບໄຊ໌ ຂອງໂຄງການທີ່: http://clearlaos.org/vacancy.

4. ເອກະສານຍື່ນສະມັກ ຕ້ອງສົ່ງເປັນລາຍລັກອັກສອນ ດ້ວຍຕົນເອງ ສົ່ງທາງອີເມວ ທີ່: **info.hr@clearlaos.org.** ຫ້ອງການໂຄງການ ປຊກ ຈະພິຈາລະນາຜູ້ທີ່ຖືກຄັດເລືອກທີ່ເໝາະສົມທີ່ສຸດ ທາງອີເມວ ພາຍຫລັງທີ່ໄດ້ຮັບອະນຸມັດເປັນທາງການ ຈາກຜູ້ໃຫ້ທຶນ, **ວັນທີປິດຮັບເອກະສານຍື່ນສະມັກ ແມ່ນວັນທີ 16 ມີນາ 2026.**

ນະຄອນຫລວງວຽງຈັນ, ວັນທີ 03 ມີນາ 2026

ຮກ. ຜູ້ອຳນວຍການ

ປອ. ວົງປະພັນ ມະນີວົງ